ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 155 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 19 ກຸມພາ 2025

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ຄໍາສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023;
- ອີງຕາມ ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 138/ຫສນຍ, ລົງວັນທີ 27 ມັງກອນ 2025;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ຜູ້ວ່າການ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປ ລາວ ເພື່ອຮັບປະກັນການເຄື່ອນໄຫວບັນຊີເງິນຝາກດັ່ງກ່າວ ສອດຄ່ອງກັບກົດໝາຍ, ມີຄວາມເປັນເອກະພາບ ແລະ ສາມາດຄຸ້ມຄອງຕິດຕາມໄດ້ ແນໃສ່ສ້າງຄວາມສົມດູນທາງດ້ານເງິນຕາໃນລະບົບເສດຖະກິດຂອງ ສປປ ລາວ.

### ມາດຕາ 2 ການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປ ລາວ

ການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປ ລາວ ແມ່ນ ການຈັດຕັ້ງປະຕິບັດບັນດາ ຫຼັກການ, ລະບຽບການ ແລະ ມາດຕະການ ໃນການເປີດ ແລະ ການເຄື່ອນໄຫວ ບັນຊີເງິນຝາກເງິນຕາຕ່າງປະເທດ ຂອງຜູ້ມີ ແລະ ບໍ່ມີ ພູມລໍາເນົາ ຢູ່ ສປປ ລາວ ນໍາທະນາຄານທຸລະກິດໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ລວມທັງທະນາຄານທຸລະກິດ, ກົມພາຍໃນ ທຫລ ແລະ ທຫລ ປະຈຳພາກ ທີ່ເຄື່ອນໄຫວກ່ຽວຂ້ອງກັບການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປ ລາວ.

ຂໍ້ຕົກລົງສະບັບນີ້ ບໍ່ນຳໃຊ້ສຳລັບບັນຊີເງິນຝາກກ່ຽວກັບ ການນຳເຂົ້າ-ສົ່ງອອກ ແລະ ການລົງທຶນ.

## ໝວດທີ 2
## ການເປີດບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປ ລາວ

**ມາດຕາ 4 ການເປີດບັນຊີເງິນຝາກເງິນຕາຕ່າງປະເທດ**

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ສາມາດນຳເອົາເງິນຕາຕ່າງປະເທດທີ່ຢູ່ໃນການຄອບຄອງຂອງຕົນໄປຝາກໄວ້ນຳທະນາຄານທຸລະກິດໃດໜຶ່ງ ຊຶ່ງທະນາຄານດັ່ງກ່າວ ເປັນຜູ້ເປີດບັນຊີເງິນຝາກເງິນຕາຕ່າງປະເທດດ້ວຍການອອກຊື່ ແລະ ເລກບັນຊີ ໃຫ້ແກ່ຜູ້ຝາກເງິນ.

ປະເພດຂອງບັນຊີເງິນຝາກເງິນຕາຕ່າງປະເທດ ປະກອບດ້ວຍ ບັນຊີເງິນຝາກກະແສລາຍວັນ, ບັນຊີເງິນຝາກປະຢັດ, ບັນຊີເງິນຝາກປະຈຳ ແລະ ບັນຊີເງິນຝາກປະເພດອື່ນ ທີ່ທະນາຄານທຸລະກິດໃຫ້ບໍລິການ.

**ມາດຕາ 5 ເງື່ອນໄຂການເປີດບັນຊີເງິນຝາກເງິນຕາຕ່າງປະເທດ**

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ທີ່ມີເງື່ອນໄຂໃນການເປີດບັນຊີເງິນຝາກເງິນຕາຕ່າງປະເທດ ຕ້ອງເປັນຜູ້ທີ່ມີເງິນຕາຕ່າງປະເທດໄວ້ໃນການຄອບຄອງ ແລະ/ຫຼື ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ.

**ມາດຕາ 6 ການສະເໜີເປີດບັນຊີເງິນຝາກເງິນຕາຕ່າງປະເທດ**

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ທີ່ມີຈຸດປະສົງເປີດບັນຊີເງິນຝາກເງິນຕາຕ່າງປະເທດ ຕ້ອງຍື່ນໜັງສືສະເໜີຕໍ່ທະນາຄານທຸລະກິດ ຕາມແບບພິມຂອງທະນາຄານດັ່ງກ່າວ ແລະ ປະກອບເອກະສານ ໃນແຕ່ລະກໍລະນີ ດັ່ງນີ້:

1. ຜູ້ມີພູມລຳເນົາ ຢູ່ ສປປ ລາວ:

1.1. ບຸກຄົນ:

1.1.1. ສຳເນົາ ບັດປະຈຳຕົວ, ສຳມະໂນຄົວ ຫຼື ໜັງສືຜ່ານແດນ (Passport) ສຳລັບພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ແລະ ທຳມາຫາກິນຢ່າງຖາວອນ;

1.1.2. ສຳເນົາ ໜັງສືຜ່ານແດນ (Passport) ແລະ ເອກະສານຮັບຮອງການວ່າຈ້າງໃດໜຶ່ງ ເປັນຕົ້ນ ໜັງສືຮັບຮອງການອອກແຮງງານຈາກຜູ້ວ່າຈ້າງ, ສັນຍາແຮງງານ ຫຼື ໜັງສືຮັບຮອງແຮງງານຈາກຂະແໜງການທີ່ກ່ຽວຂ້ອງ ສຳລັບຄົນຕ່າງປະເທດທີ່ມາອອກແຮງງານ;

1.2. ວິສາຫະກິດ:

1.2.1. ສຳເນົາໃບທະບຽນວິສາຫະກິດ;

1.2.2. ສຳເນົາໃບອະນຸຍາດລົງທຶນ (ຖ້າມີ);

1.2.3. ສຳເນົາໃບອະນຸຍາດດຳເນີນທຸລະກິດ (ຖ້າມີ);

1.2.4. ໃບມອບສິດໃຫ້ຜູ້ຕາງໜ້າ ໃນການສະເໜີເປີດບັນຊີເງິນຝາກເງິນຕາຕ່າງປະເທດ (ຖ້າມີ);

1.3. ການຈັດຕັ້ງ:

1.3.1. ການຈັດຕັ້ງລັດ:

1) ເອກະສານກ່ຽວກັບການຕົກລົງໃຫ້ເປີດບັນຊີເງິນຝາກເງິນຕາຕ່າງປະເທດ ຈາກອົງການທີ່ມີສິດອຳນາດທີ່ກ່ຽວຂ້ອງ;

2) ໃບມອບສິດໃຫ້ຜູ້ຕາງໜ້າ ໃນການສະເໜີເປີດບັນຊີເງິນຝາກເງິນຕາຕ່າງປະເທດ;

1.3.2. ການຈັດຕັ້ງສັງຄົມ ແລະ ການຈັດຕັ້ງອື່ນ: ເອກະສານຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.3.1 ຂອງມາດຕານີ້ ແລະ ສຳເນົາເອກະສານການສ້າງຕັ້ງການຈັດຕັ້ງດັ່ງກ່າວ.

2. ຜູ້ທີ່ບໍ່ມີພູມລຳເນົາ ຢູ່ ສປປ ລາວ:

2.1. ບຸກຄົນ: ເອກະສານຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.1 ຂອງມາດຕານີ້;

2.2. ວິສາຫະກິດ:

2.2.1. ສຳເນົາ ສັນຍາຮັບເໝົາ, ສັນຍາການຊື້ ຂາຍ ຫຼື ໃບສັ່ງຊື້ ສິນຄ້າ ແລະ ການບໍລິການ ທີ່ຢັ້ງຢືນການເຄື່ອນໄຫວທຸລະກຳການເງິນ ຢູ່ ສປປ ລາວ;

2.2.2. ໃບມອບສິດໃຫ້ຜູ້ຕາງໜ້າ ໃນການສະເໜີເປີດບັນຊີເງິນຝາກເງິນຕາຕ່າງປະເທດ (ຖ້າມີ);

2.3. ການຈັດຕັ້ງ:

2.3.1. ການຈັດຕັ້ງລັດ: ເອກະສານຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.3.1 ຂອງມາດຕານີ້;

2.3.2. ການຈັດຕັ້ງສັງຄົມ ແລະ ການຈັດຕັ້ງອື່ນ: ເອກະສານຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.3.2 ຂອງມາດຕານີ້ ແລະ ສຳເນົາໜັງສືຢັ້ງຢືນການເຄື່ອນໄຫວ ຢູ່ ສປປ ລາວ ຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 7 ການພິຈາລະນາການເປີດບັນຊີເງິນຝາກເງິນຕາຕ່າງປະເທດ**

ທະນາຄານທຸລະກິດ ພິຈາລະນາເປີດບັນຊີເງິນຝາກໃຫ້ແກ່ຜູ້ສະເໜີ ຕາມລະບຽບການຂອງຕົນ ໂດຍສອດຄ່ອງກັບຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ໃນເວລາພິຈາລະນານັ້ນ ຖ້າເຫັນວ່າມີຄວາມຈຳເປັນ ທະນາຄານທຸລະກິດ ສາມາດຮຽກເອົາເອກະສານ ຫຼື ຂໍ້ມູນເພີ່ມເຕີມຈາກຜູ້ສະເໜີໄດ້.

## ໝວດທີ 3
## ການເຄື່ອນໄຫວບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປ ລາວ

**ມາດຕາ 8 ການຝາກເງິນ**

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ສາມາດຝາກເງິນເຂົ້າບັນຊີເງິນຝາກເງິນຕາຕ່າງປະເທດ ແລະ ໄດ້ຮັບດອກເບ້ຍ ຕາມປະເພດບັນຊີເງິນຝາກເງິນຕາຕ່າງປະເທດ ທີ່ໄດ້ກຳນົດໄວ້ໃນລະບຽບການຂອງທະນາຄານທຸລະກິດ.

**ມາດຕາ 9 ການຖອນເງິນ**

ເຈົ້າຂອງບັນຊີເງິນຝາກ ສາມາດຖອນເງິນເປັນເງິນຕາຕ່າງປະເທດຈາກບັນຊີເງິນຝາກເງິນຕາຕ່າງປະເທດ ໂດຍດຳເນີນຜ່ານປ່ອງບໍລິການຂອງທະນາຄານທຸລະກິດເທົ່ານັ້ນ.

ທະນາຄານທຸລະກິດ ເປັນຜູ້ກຳນົດ ເງື່ອນໄຂ, ວົງເງິນ ແລະ ຄ່າທຳນຽມ ໃນການຖອນເງິນຈາກບັນຊີເງິນຝາກດັ່ງກ່າວ ໂດຍສອດຄ່ອງກັບລະບຽບການບໍລິຫານສະພາບຄ່ອງຂອງທະນາຄານທຸລະກິດ ທີ່ ທຫລ ວາງອອກ.

**ມາດຕາ 10 ການໂອນເງິນ**

ເຈົ້າຂອງບັນຊີເງິນຝາກ ສາມາດໂອນເງິນຜ່ານບັນຊີເງິນຝາກເງິນຕາຕ່າງປະເທດໃນສະກຸນດຽວກັນເທົ່ານັ້ນ ໂດຍປະຕິບັດ ດັ່ງນີ້:

1. ການໂອນເງິນ ລະຫວ່າງບັນຊີເງິນຝາກເງິນຕາຕ່າງປະເທດ ອອກຊື່ດຽວກັນ ມີຄ່າທຳນຽມການໂອນເງິນຕາມລະບຽບການຂອງທະນາຄານທຸລະກິດ ແລະ ສາມາດປະຕິບັດໄດ້ໂດຍບໍ່ຈຳກັດຈຳນວນ;

2. ການໂອນເງິນ ລະຫວ່າງບັນຊີເງິນຝາກເງິນຕາຕ່າງປະເທດ ອອກຊື່ຕ່າງກັນ ມີຄ່າທຳນຽມການໂອນເງິນຈາກທະນາຄານທຸລະກິດຕົ້ນທາງ ສູນຈໍ້າຫ້າ ສ່ວນຮ້ອຍ (0.5%) ຂອງມູນຄ່າທຸລະກຳ ແຕ່ບໍ່ຫຼຸດ ໜຶ່ງ (1) ໂດລາສະຫະລັດ ຫຼື ທຽບເທົ່າ ແລະ ບໍ່ເກີນ ຫ້າສິບ (50) ໂດລາສະຫະລັດ ຫຼື ທຽບເທົ່າ ຕໍ່ໜຶ່ງທຸລະກຳ ໂດຍປະຕິບັດໃນແຕ່ລະກໍລະນີ ດັ່ງນີ້:

2.1. ບັນຊີເງິນຝາກເງິນຕາຕ່າງປະເທດຂອງບຸກຄົນ:

2.1.1. ຈຳນວນບໍ່ເກີນ ໜຶ່ງພັນ (1,000) ໂດລາສະຫະລັດ ຫຼື ທຽບເທົ່າ ຕໍ່ວັນ ໂດຍໃສ່ຈຸດປະສົງຂອງການໂອນເງິນ;

2.1.2. ຈຳນວນ ໜຶ່ງພັນ (1,000) ໂດລາສະຫະລັດ ຫຼື ທຽບເທົ່າຂຶ້ນໄປ ຕໍ່ວັນ ໂດຍໃສ່ຈຸດປະສົງຂອງການໂອນເງິນ ແລະ ຄັດຕິດເອກະສານທີ່ກ່ຽວຂ້ອງ.

2.2. ບັນຊີເງິນຝາກເງິນຕາຕ່າງປະເທດຂອງວິສາຫະກິດ:

2.2.1. ຈຳນວນບໍ່ເກີນ ສິບພັນ (10,000) ໂດລາສະຫະລັດ ຫຼື ທຽບເທົ່າ ຕໍ່ວັນ ໂດຍໃສ່ຈຸດປະສົງຂອງການໂອນເງິນ;

2.2.2. ຈຳນວນ ສິບພັນ (10,000) ໂດລາສະຫະລັດ ຫຼື ທຽບເທົ່າຂຶ້ນໄປ ຕໍ່ວັນ ໂດຍໃສ່ຈຸດປະສົງຂອງການໂອນເງິນ ແລະ ຄັດຕິດເອກະສານທີ່ກ່ຽວຂ້ອງ.

2.3. ບັນຊີເງິນຝາກເງິນຕາຕ່າງປະເທດຂອງການຈັດຕັ້ງ:

2.3.1. ຈຳນວນບໍ່ເກີນ ຊາວພັນ (20,000) ໂດລາສະຫະລັດ ຫຼື ທຽບເທົ່າ ຕໍ່ວັນ ໂດຍໃສ່ຈຸດປະສົງຂອງການໂອນເງິນ;

2.3.2. ຈຳນວນ ຊາວພັນ (20,000) ໂດລາສະຫະລັດ ຫຼື ທຽບເທົ່າຂຶ້ນໄປ ຕໍ່ວັນ ໂດຍໃສ່ຈຸດປະສົງຂອງການໂອນເງິນ ແລະ ຄັດຕິດເອກະສານທີ່ກ່ຽວຂ້ອງ.

**ມາດຕາ 11 ການປິດບັນຊີເງິນຝາກເງິນຕາຕ່າງປະເທດ**

ເຈົ້າຂອງບັນຊີເງິນຝາກ ສາມາດປິດບັນຊີເງິນຝາກເງິນຕາຕ່າງປະເທດຂອງຕົນ ພາຍຫຼັງສິ້ນສຸດການເຄື່ອນໄຫວ ຫຼື ບໍ່ມີຈຸດປະສົງນຳໃຊ້ ບັນຊີເງິນຝາກດັ່ງກ່າວ ໂດຍປະຕິບັດຕາມລະບຽບການຂອງທະນາຄານທຸລະກິດ.

## ໝວດທີ 4
## ສິດ ແລະ ໜ້າທີ່ ຂອງພາກສ່ວນທີ່ກ່ຽວຂ້ອງ

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງເງິນຕາຕ່າງປະເທດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ເພື່ອສະເໜີຂັ້ນເທິງພິຈາລະນາ ພ້ອມທັງຜັນຂະຫຍາຍນະໂຍບາຍ ແລະ ເຜີຍແຜ່ນິຕິກຳດັ່ງກ່າວ ໃຫ້ໄດ້ຮັບຜົນດີ;

2. ສັງລວມ ແລະ ວິເຄາະ ຂໍ້ມູນ ແລະ ເອກະສານຕ່າງໆ ພ້ອມທັງສະຫຼຸບສະພາບ ແລະ ຕີລາຄາ ການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ເພື່ອລາຍງານຂັ້ນເທິງຢ່າງເປັນປົກກະຕິ;

3. ຕິດຕາມ ກວດກາ ການເປີດ ແລະ ການເຄື່ອນໄຫວ ບັນຊີເງິນຝາກເງິນຕາຕ່າງປະເທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການນຳໃຊ້ມາດຕະການຕໍ່ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້;

5. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບ ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບການຊໍາລະ, ທຫລ ປະຈໍາພາກ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຂອງຕົນ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງທະນາຄານທຸລະກິດ**

ກົມຄຸ້ມຄອງທະນາຄານທຸລະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ກວດກາ ທະນາຄານທຸລະກິດໃນການເປີດ ແລະ ເຄື່ອນໄຫວ ບັນຊີເງິນຝາກເງິນຕາຕ່າງປະເທດ ໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

2. ເກັບກຳ, ສັງລວມ ແລະ ວິເຄາະ ຂໍ້ມູນ ກ່ຽວກັບການໃຫ້ບໍລິການບັນຊີເງິນຝາກເງິນຕາຕ່າງປະເທດ ຂອງທະນາຄານທຸລະກິດ;

3. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບ ກົມຄຸ້ມຄອງເງິນຕາຕ່າງປະເທດ, ກົມຄຸ້ມຄອງລະບົບການຊໍາລະ, ທຫລ ປະຈໍາພາກ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຂອງຕົນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງລະບົບການຊໍາລະ**

ກົມຄຸ້ມຄອງລະບົບການຊໍາລະ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊຸກຍູ້ທະນາຄານທຸລະກິດ ພັດທະນາເຄື່ອງມື ແລະ ຊ່ອງທາງ ການຊໍາລະ ໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

2. ເກັບກຳ ແລະ ສັງລວມ ຂໍ້ມູນການໂອນເງິນ ຜ່ານລະບົບການໃຫ້ບໍລິການຊໍາລະເງິນ;

3. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບ ກົມຄຸ້ມຄອງເງິນຕາຕ່າງປະເທດ, ກົມຄຸ້ມຄອງທະນາຄານທຸລະກິດ, ທຫລ ປະຈໍາພາກ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຂອງຕົນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງ ທຫລ ປະຈຳພາກ**

ທຫລ ປະຈຳພາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳ ແລະ ສັງລວມ ຂໍ້ມູນ ແລະ ເອກະສານຕ່າງໆ ກ່ຽວກັບການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ບັນດາແຂວງທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;

2. ຕິດຕາມ ກວດກາ ການເປີດ ແລະ ການເຄື່ອນໄຫວ ບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ບັນດາແຂວງທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

3. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບ ກົມຄຸ້ມຄອງເງິນຕາຕ່າງປະເທດ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບການຊຳລະ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຂອງຕົນ;

4. ສະຫຼຸບສະພາບການເປີດ ແລະ ການເຄື່ອນໄຫວ ບັນຊີເງິນຝາກເງິນຕາຕ່າງປະເທດ ຂອງສາຂາທະນາຄານທຸລະກິດ ເພື່ອລາຍງານໃຫ້ກົມຄຸ້ມຄອງເງິນຕາຕ່າງປະເທດ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບການຊຳລະ ແລະ ຂັ້ນເທິງຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ບໍລິການ ເປີດ ແລະ ເຄື່ອນໄຫວ ບັນຊີເງິນຝາກເງິນຕາຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

2. ສ້າງລະບຽບການພາຍໃນ ກ່ຽວກັບການເຄື່ອນໄຫວບັນຊີເງິນຝາກເງິນຕາຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ກຳນົດ ເງື່ອນໄຂ, ວົງເງິນ ແລະ ຄ່າທຳນຽມ ໃນການເຄື່ອນໄຫວບັນຊີເງິນຝາກເງິນຕາຕ່າງປະເທດ ໂດຍສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ພັດທະນາລະບົບ ຫຼື ຂະຫຍາຍຕາໜ່າງ ການໃຫ້ບໍລິການ ເພື່ອຮອງຮັບການເຄື່ອນໄຫວບັນຊີເງິນຝາກເງິນຕາຕ່າງປະເທດ ໂດຍໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

5. ເກັບກຳຂໍ້ມູນ ຕາມລະບຽບການກ່ຽວກັບການຊອກຮູ້ລູກຄ້າ ທີ່ເປັນບຸກຄົນ, ວິສາຫະກິດ ແລະ ການຈັດຕັ້ງ;

6. ເກັບກຳຂໍ້ມູນກ່ຽວກັບການເຄື່ອນໄຫວບັນຊີເງິນຝາກເງິນຕາຕ່າງປະເທດ ເປັນຕົ້ນ ຈຳນວນທຸລະກຳ, ຈຳນວນເງິນ, ຈຸດປະສົງໃນການດຳເນີນທຸລະກຳ ແລະ ເອກະສານຄັດຕິດທີ່ກ່ຽວຂ້ອງ;

7. ລາຍງານກ່ຽວກັບການໃຫ້ບໍລິການ ແລະ ການເຄື່ອນໄຫວບັນຊີເງິນຝາກເງິນຕາຕ່າງປະເທດ ໃຫ້ ທຫລ ຕາມແບບພິມທີ່ກຳນົດ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ວິສາຫະກິດ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວບັນຊີເງິນຝາກເງິນຕາຕ່າງປະເທດ ບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

2. ປິດບັງຂໍ້ມູນ, ສະໜອງຂໍ້ມູນບໍ່ຖືກຕ້ອງ ຫຼື ປອມແປງເອກະສານ ກ່ຽວກັບການເປີດ ແລະ ການເຄື່ອນໄຫວບັນຊີເງິນຝາກເງິນຕາຕ່າງປະເທດ;

3. ນຳໃຊ້ບັນຊີເງິນຝາກເງິນຕາຕ່າງປະເທດ ເພື່ອບໍລິການແລກປ່ຽນເງິນຕາ ໂດຍບໍ່ໄດ້ຮັບອະນຸຍາດ;

4. ນຳໃຊ້ບັນຊີເງິນຝາກເງິນຕາຕ່າງປະເທດ ເພື່ອເປັນເຄື່ອງມືປັ່ນປ່ວນອັດຕາແລກປ່ຽນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 18 ຂໍ້ຫ້າມສຳລັບທະນາຄານທຸລະກິດ**

ຫ້າມທະນາຄານທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການເປີດບັນຊີເງິນຝາກເງິນຕາຕ່າງປະເທດ ແກ່ຜູ້ທີ່ມີເງື່ອນໄຂບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

2. ອຳນວຍຄວາມສະດວກໃນການເຄື່ອນໄຫວບັນຊີເງິນຝາກເງິນຕາຕ່າງປະເທດ ບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

3. ໃຫ້ບໍລິການຖອນເງິນເປັນເງິນຕາຕ່າງປະເທດ ໂດຍບໍ່ຜ່ານປ່ອງບໍລິການທີ່ກຳນົດ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 19 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ວິສາຫະກິດ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີລັກສະນະເບົາ ແລະ ເປັນຄັ້ງທຳອິດ ຈະຖືກກ່າວເຕືອນ ຢ່າງເປັນລາຍລັກອັກສອນ ແຕ່ຖ້າຍັງສືບຕໍ່ລະເມີດຊໍ້າ ຈະຖືກປັບໃໝ ໃນແຕ່ລະກໍລະນີ ດັ່ງນີ້:

1. ປັບໃໝແຕ່ 10,000,000 (ສິບລ້ານ) ກີບ ຫາ 20,000,000 (ຊາວລ້ານ) ກີບ ສຳລັບການລະເມີດທີ່ບໍ່ສາມາດກຳນົດມູນຄ່າ ຫຼື ການລະເມີດທີ່ມີມູນຄ່າບໍ່ເກີນ ຫຼື ທຽບເທົ່າ 10,000,000 (ສິບລ້ານ) ກີບ;

2. ປັບໃໝ ສິບສ່ວນຮ້ອຍ (10%) ຂອງມູນຄ່າທີ່ລະເມີດ ແຕ່ບໍ່ຫຼຸດ 20,000,000 (ຊາວລ້ານ) ກີບ ສຳລັບການລະເມີດທີ່ມີມູນຄ່າແຕ່ 10,000,000 (ສິບລ້ານ) ກີບ ຂຶ້ນໄປ;

3. ປັບໃໝ ສອງເທົ່າ ຂອງມູນຄ່າປັບໃໝໃນຄັ້ງຫຼ້າສຸດ ສຳລັບການລະເມີດຊໍ້າໃນແຕ່ລະກໍລະນີ.

ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີລັກສະນະເບົາ ແລະ ເປັນຄັ້ງທຳອິດ ຈະຖືກກ່າວເຕືອນ ຢ່າງເປັນລາຍລັກອັກສອນ ພ້ອມທັງໃຫ້ປັບປຸງແກ້ໄຂການລະເມີດ ພາຍໃນເວລາ ຫ້າ ວັນລັດຖະການ, ຖ້າເກີນກຳນົດເວລາດັ່ງກ່າວ ແຕ່ຍັງບໍ່ໄດ້ປັບປຸງແກ້ໄຂ, ບໍ່ສາມາດປັບປຸງແກ້ໄຂໄດ້ ຫຼື ມີການລະເມີດຊໍ້າ ຈະຖືກປັບໃໝ 20,000,000 (ຊາວລ້ານ) ກີບ ຕໍ່ວັນ ພ້ອມທັງແຈ້ງໃຫ້ມອບຊີນຊາບ.

ໃນກໍລະນີທີ່ທະນາຄານທຸລະກິດ ຖືກປັບໃໝຕາມທີ່ໄດ້ກຳນົດໄວ້ໃນວັກທີສອງ ຂອງມາດຕານີ້ ແຕ່ຍັງບໍ່ປັບປຸງແກ້ໄຂ ຫຼື ບໍ່ສາມາດປັບປຸງແກ້ໄຂໄດ້ ພາຍໃນເວລາ ສາມສິບ ວັນ ຈະຖືກໂຈະການໃຫ້ບໍລິການທີ່ມີການລະເມີດນັ້ນ ຈົນກວ່າຈະມີການປັບປຸງແກ້ໄຂ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບການຊຳລະ, ທຫລ ປະຈຳພາກ, ທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ ສີ່ສິບຫ້າວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນເນື້ອໃນທີ່ກ່ຽວຂ້ອງກັບການເປີດ ແລະ ນຳໃຊ້ ບັນຊີເງິນຝາກເງິນຕາຕ່າງປະເທດ ທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນຳເງິນສົດ ເຂົ້າ-ອອກ ສປປ ລາວ ສະບັບເລກທີ 454/ທຫລ, ລົງວັນທີ 30 ພຶດສະພາ 2019.

ເຊັນແທນ ຮັກສາການຜູ້ວ່າການ
ຮອງຜູ້ວ່າການ

ສາຄຸນ ບຸນຍົງ